ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 19 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 04.10.2021

# ຄຳສັ່ງ
# ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ (2021-2023)

ເຖິງ: ບັນດາທ່ານ ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ບັນດາເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ໃນທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 02/ສພຊ, ລົງວັນທີ 9 ສິງຫາ 2021;
- ອີງຕາມ ມະຕິ ຂອງ ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສະພາແຫ່ງຊາດຊຸດທີ IX ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ (2021-2023) ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021.

ເພື່ອຮັບປະກັນໃຫ້ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ (2021-2023) ໄດ້ຮັບການຈັດຕັ້ງປະຕິບັດຢ່າງ ຮີບດ່ວນ, ທັນການ, ມີປະສິດທິພາບ ແລະ ປະສິດທິຜົນ,

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ ເປັນເຈົ້າການຍົກສູງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ຄຳສັ່ງເລກທີ 02/ກມສພ, ລົງວັນທີ 26 ກໍລະກົດ 2021 ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳ ຂອງຄະນະພັກແຕ່ລະຂັ້ນຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ແລະ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 02/ສພຊ, ລົງວັນທີ 9 ສິງຫາ 2021 ໂດຍຫັນເປັນແຜນການລະອຽດສະເພາະ ໃນການຈັດຕັ້ງປະຕິບັດ ຕາມໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

2. ມອບໃຫ້ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ບັນດາທ່ານ ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ຮັບຜິດຊອບໂດຍກົງຕໍ່ລັດຖະບານ ແລະ ໃນການຊີ້ນຳ ສ້າງແຜນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງວາລະແຫ່ງຊາດ ໃຫ້ສອດຄ່ອງກັບສະພາບ ຈຸດພິເສດຂອງ ຂະແໜງການ ແລະ ທ້ອງຖິ່ນຕົນ ຕາມການແບ່ງຄວາມຮັບຜິດຊອບ ທີ່ໄດ້ກຳນົດໃນວາລະແຫ່ງຊາດ ໃຫ້ປະກົດຜົນເປັນຈິງ;

3. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເສນາທິການໃຫ້ແກ່ລັດຖະບານ ໃນການສ້າງກົນໄກການປະສານງານ ແລະ ເປັນເຈົ້າການຊຸກຍູ້ ບັນດາຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ

ເພື່ອລົງຕິດຕາມ, ກວດກາ, ສະຫຼຸບຕີລາ, ປະເມີນຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນແຕ່ລະໄລຍະ ໃຫ້ສໍາເລັດຕາມຈຸດປະສົງ, ຄາດໝາຍ ແລະ ກໍານົດເວລາ ທີ່ວາງໄວ້;

4. ມອບໃຫ້ບັນດາທ່ານ ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ບັນດາທ່ານ ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ກໍານົດຈຸດປະສານງານຂອງຕົນ ຄື:

ຂັ້ນສູນກາງ ກະຊວງ, ອົງການ ໃຫ້ກໍານົດເອົາຫ້ອງການ ຂອງ ກະຊວງ, ອົງການ ເປັນຈຸດໃຈກາງປະສານງານ;

ຂັ້ນທ້ອງຖິ່ນ ແຂວງ ແລະ ນະຄອນຫຼວງ ໃຫ້ກໍານົດເອົາຫ້ອງວ່າການ ແຂວງ ແລະ ນະຄອນຫຼວງ ເປັນຈຸດປະສານງານ;

ສໍາລັບກອງບັນຊາການທະຫານຂັ້ນ ແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນ ແຂວງ ໃຫ້ກໍານົດເອົາຫ້ອງການຂອງກອງບັນຊາການ ເປັນຈຸດປະສານງານ;

ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ແລະ ສ້າງແຜນການເຄື່ອນໄຫວລະອຽດ ໂດຍສົມທົບ ກັບ ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ໄດ້ເປັນຮູບປະທໍາໂດຍໄວ;

5. ງົບປະມານ ຮັບໃຊ້ເຂົ້າໃນການເຄື່ອນໄຫວຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ຂຶ້ນແຜນງົບປະມານນໍາໃຊ້ງົບປະມານຂອງລັດຖະບານ ແລະ ສົມທົບ ກັບ ງົບປະມານໄດ້ມາຈາກການຊ່ວຍເຫຼືອຂອງ ສາກົນ, ສັງຄົມ ແລະ ຈາກກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

6. ການຄົ້ນຄວ້າ ປະຕິບັດນະໂຍບາຍດ້ານຕ່າງໆ ຕໍ່ກັບຜູ້ທີ່ມີຜົນງານໃນການເຄື່ອນໄຫວປະຕິບັດໜ້າທີ່ ແກ້ໄຂບັນຫາຢາເສບຕິດ ເປັນຕົ້ນ ເຈົ້າໜ້າທີ່, ພະນັກງານລັດ, ປະຊາຊົນ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ປະກອບສ່ວນເຂົ້າໃນວຽກງານ ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດນັ້ນ ມອບໃຫ້ ບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ ເປັນຜູ້ຄົ້ນຄວ້າ ໂດຍໃຫ້ສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ ເພື່ອສະເໜີລັດຖະບານ ພິຈາລະນາ ເປັນແຕ່ລະໄລຍະ ຕາມຄວາມເໝາະສົມ;

7. ໃຫ້ບັນດາ ກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ສະຫຼຸບ, ຕີລາຄາ, ປະເມີນຜົນ, ເຮັດບົດລາຍງານ, ສັງລວມຕົວເລກສະຖິຕິ, ຜົນຂອງການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍວາລະແຫ່ງຊາດ ຢູ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ເປັນແຕ່ລະ ເດືອນ, ໄຕມາດ, 06 ເດືອນ ແລະ 01 ປີ ສົ່ງໃຫ້ກະຊວງປ້ອງກັນຄວາມສະຫງົບຊາບ ໃນແຕ່ລະໄລຍະ;

8. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ສັງລວມສະພາບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນດ້ານການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດທົ່ວປະເທດ ເພື່ອສະຫຼຸບ ແລະ ລາຍງານ ເປັນແຕ່ລະ ໄຕມາດ, 06 ເດືອນ ແລະ 01 ປີ ສົ່ງໃຫ້ລັດຖະບານ ເພື່ອໃຫ້ທິດຊີ້ນໍາ;

9. ໃຫ້ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ໃນທົ່ວປະເທດ ຄົ້ນຄວ້າ ກໍາແໜ້ນ ຄໍາສັ່ງສະບັບນີ້, ພ້ອມທັງຜັນຂະຫຍາຍອອກເປັນໜ້າວຽກລະອຽດຕາມຄວາມຮັບຜິດຊອບຂອງຕົນ ໂດຍໄວ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ. ໃນກໍລະນີຂະແໜງການໃດ, ທ້ອງຖິ່ນໃດ ຫາກລະເມີດຕໍ່ຄໍາສັ່ງສະບັບນີ້ ແມ່ນຄະນະນໍາຂອງຂະແໜງການນັ້ນ ຫຼື ທ້ອງຖິ່ນນັ້ນ ຕ້ອງຮັບຜິດຊອບ ຕໍ່ລັດຖະບານ, ຕໍ່ກົດໝາຍ ແລະ ລະບຽບການ;

10. ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄໍາ ວິພາວັນ